# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 13 ມິຖຸນາ 2021 (06-13-2021)

---

**ຢືນຢູ່ຢ່າງໝັ້ນຄົງໃນຄວາມທຸກລຳບາກຍາກຈົນ.**

*ມີຄວາມຢ້ານກົວຫຍັງແດ່ທີ່ທ່ານຈະຕ້ອງໄດ້ເອົາຊະນະ?*

**ຈຸດສຳຄັນໃນບົດຮຽນ:** ພວກເຮົາບໍ່ຈຳເປັນຕ້ອງຢ້ານກົວເພາະວ່າພວກເຮົາເຕັມລົ້ນໃນພຣະຄຸນຂອງພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**
ເຈົ້າເຄີຍມີຄວາມຢ້ານກົວຈັກເທື່ອບໍ່? ຂ້າພະເຈົ້າໝາຍຄວາມວ່າຢ້ານກົວຈົນເຖິງຈຸດທີ່ເຈົ້າຢ້ານກົວຕໍ່ຊີວິດຂອງເຈົ້າ. ເມື່ອຫຼາຍປີກ່ອນຂ້າພະເຈົ້າໄດ້ຮັບໃຊ້ຄຽງຄູ່ກັບຄົນອື່ນໆໃນການເດີນທາງໄປເຜີຍແຜ່ຢູ່ລອນດອນ. ພວກເຮົາໄດ້ພາກັນໄປຍ່າງອະທິຖານໃນຕອນບ່າຍມື້ນຶ່ງໃນບໍລິເວນທີ່ເຕັມໄປດ້ວຍວັດມຸສລິມ (mosques), ແລະພວກປະທ້ວງກໍຢູ່ຕາມຖນົນຫົນທາງ. ໃນຂນະທີ່ພວກເຮົາຍ່າງໄປແລະອະທິຖານຂໍໃຫ້ພຣະເຈົ້າຊົງປາກົດຢູ່ໃນພື້ນທີ່ນັ້ນ, ພວກເຮົາເລີ່ມໄດ້ຍິນສຽງຮ້ອງຈາກກຸ່ມຜູ້ຊາຍທີ່ຢູ່ກົງຂ້າມຖນົນວ່າ: "ຂ້າຊາວຄຣິສຕຽນ! ຂ້າຊາວຄຣິສຕຽນ!" ພວກເຂົາກຳລັງຊີ້ໄປທີ່ກຸ່ມນ້ອຍຂອງພວກເຮົາໃນຂນະທີ່ຮ້ອງຄຳເຫຼົ່ານັ້ນ. ບໍ່ຈຳເປັນຕ້ອງເວົ້າ, ນັ້ນແມ່ນຊ່ວງເວລາທີ່ໜ້າຢ້ານກົວສຳລັບກຸ່ມພວກເຮົາ. ຂ້າພະເຈົ້າໄດ້ຮີບຮ້ອນທຸກຄົນພ້ອມກັນແລະພວກເຮົາໄດ້ອອກຈາກພື້ນທີ່ທັນທີ. ໃນຂນະທີ່ພວກເຮົາໄດ້ຄິດໄຕ່ຕອງກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນ, ພວກເຮົາຮູ້ວ່າພວກເຮົາບໍ່ຕ້ອງຢ້ານເພາະວ່າພວກເຮົາໄດ້ຖືກບອກໄວ້ໃນພຣະຄັມພີວ່າ: ສຳລັບຜູ້ທີ່ຕິດຕາມພຣະເຢຊູ, ພວກເຂົາຈະປະເຊີນກັບເວລາທີ່ຖືກຂົ່ມເຫັງແຕ່ວ່າພຣະອົງຈະຢູ່ກັບພວກເຂົາ. ໃນຂ່າວສານທີ່ພຣະເຢຊູໄດ້ມອບໃຫ້ກັບຄຣິສຕະຈັກແຫ່ງເມືອງຊະມີນາ (Smyrna), ພວກເຮົາຈະຮຽນຮູ້ວ່າພວກເຮົາສາມາດຢືນຢູ່ຢ່າງໝັ້ນຄົງໃນສະຖານະການທີ່ໜ້າຢ້ານກົວ; **ພວກເຮົາມີຄວາມອຸດົມສົມບູນໃນພຣະຄຸນຂອງພຣະເຈົ້າແທ້ໆ.**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ພຣະນິມິດ 2:8-9

*8 "ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງຊະມີນາວ່າ, 'ພຣະອົງຜູ້ຊົງເປັນຜູ້ຕົ້ນແລະເປັນຜູ້ປາຍ, ຜູ້*
*ຊົງສິ້ນພຣະຊົນແລ້ວແລະກັບຄືນມາອີກໄດ້ຊົງກ່າວດັ່ງນີ້ວ່າ,*
*9 "ເຮົາຮູ້ວ່າເຈົ້າມີຄວາມທຸກລຳບາກແລະຍາກຈົນ (ແຕ່*
*ວ່າເຈົ້າກໍຮັ່ງມີ) ແລະຮູ້ຄວາມໝິ່ນປມາດຂອງຄົນເຫຼົ່ານັ້ນທີ່ເວົ້າວ່າເຂົາເປັນພວກຢິວແລະເຂົາບໍ່ເປັນ ແຕ່ພວກເຂົາ*
*ເປັນພັກພວກຂອງຊາຕານ.*

ຈົ່ງສັງເກດວ່າແມ່ນໃຜກຳລັງເວົ້າກັບຄຣິສຕະຈັກ: **ແມ່ນອົງພຣະຄຣິດເອງ!** ໃນພຣະຄຳທີ່ໄດ້ໃຫ້ໄວ້ໂດຍພຣະອຳນາດອັນຍິ່ງໃຫຍ່, ພຣະຄຣິດໄດ້ຊົງເຕືອນພວກເຂົາເຈົ້າຕັ້ງແຕ່ລິເລີ່ມວ່າ: "*ພຣະອົງຜູ້ຊົງເປັນຜູ້ຕົ້ນແລະເປັນຜູ້ປາຍ, ຜູ້ຊົງສິ້ນພຣະຊົນແລ້ວແລະກັບຄືນມາອີກ*" (ຂໍ້ 8). ໃນປໂຍກທີ່ວ່າພຣະອົງຊົງເປັນຜູ້ໃດ, ພຣະເຢຊູຊົງລະບຸພຣະອົງເອງແກ່ພວກເຂົາເຈົ້າ, ຊົງສະແດງວ່າພຣະອົງເອງກໍເຄີຍໄດ້ມີຄວາມລຳບາກແຕ່ວ່າຊົງໄດ້ຮັບໄຊຊະນະໃນທ້າຍທີ່ສຸດ.

ໃນຍາມທຸກຍາກລຳບາກ, ມັນເປັນການດີທີ່ຮູ້ວ່າພຣະເຈົ້າບໍ່ໄດ້ຊົງລືມພວກທ່ານ. ພຣະອົງຊົງໄດ້ກ່າວວ່າ: "*ເຮົາ*

*ຮູ້ວ່າເຈົ້າມີຄວາມທຸກລຳບາກແລະຍາກຈົນ"* (ຂໍ້ 9). ຣັຖບານຂອງພວກເຮົາກຳນົດຄວາມຍາກຈົນໂດຍການຄຳນວນເບິ່ງລາຍໄດ້ທີ່ຕໍ່າກວ່າຄວາມຕ້ອງການເພື່ອຕອບສນອງຄວາມຈຳເປັນພື້ນຖານ. ເຖິງຢ່າງໃດກໍ່ຕາມ, ຄຳທີ່ພຣະເຢຊູຊົງໃຊ້ແມ່ນຮຸນແຮງກວ່າຫຼາຍ. ມັນແມ່ນເວົ້າເຖິງການໝົດເນື້ອໝົດຕົວ. ຄຣິສຕະຈັກເມືອງຊະມີນາເປັນຄຣິສຕະຈັກທີ່ຍາກຈົນມີພຽງແຕ່ຊັພຍາກອນເລັກນ້ອຍ. ເຖິງແມ່ນວ່າຄຣິສຕະຈັກຂາດເຂີນແລະຂາດແຄນຊັພຍາກອນທາງດ້ານວັດຖຸກໍຕາມ, ພວກເຂົາມີຄວາມອຸດົມສົມບູນຍ້ອນຄວາມສຳພັນກັບອົງພຣະເຢຊູ. ໃນເວລາທີ່ຜູ້ໃດຜູ້ນຶ່ງຢູ່ໃນຄວາມສຳພັນກັບພຣະຄຣິດ, ບໍ່ມີຫຍັງທີ່ສາມາດນຳເອົາຄວາມພໍໃຈຫຼືຄວາມຊຸ່ມຊື່ນຍິນດີກວ່າການຢູ່ໃນຄວາມສຳພັນນັ້ນ. ພວກເຮົາສາມາດມີເງິນແລະຊັບສິນໝົດໂລກນີ້, ແຕ່ມັນເປັນການອັບເສົາ(ໜ້າອາຍ)ເມື່ອປຽບທຽບໃສ່ຄວາມຮັ່ງມີທີ່ສາມາດພົບໄດ້ໃນພຣະຄຣິດເທົ່ານັ້ນ.

ພຣະເຢຊູຍັງຊົງຮູ້ດີກ່ຽວກັບການຂົ່ມເຫັງແລະຄວາມຫຍຸ້ງຍາກທີ່ເຂົາເຈົ້າປະເຊີນໜ້າ. ພວກເຂົາຖືກກ່າວປະນາມ. ຄຳເວົ້າທີ່ຫຍາບຄາຍໃນຂໍ້ນີ້ແມ່ນຄຳດຽວກັນກັບທີ່ພວກເຮົາໄດ້ຮັບການໝິ່ນປມາດ. ຊາວຢິວທີ່ເມືອງຊະມີນາມີຄວາມກຽດຊັງຊາວຄຣິສຕຽນແລະໄດ້ກ່າວຄຳໝິ່ນປມາດຕໍ່ປະຊາກອນຂອງພຣະເຈົ້າ. ຊາວຢິວອາດເຄີຍໄດ້ເປັນຊົນຊາດຢິວໂດຍເປັນນໍຣະດົກ, ແຕ່ພວກເຂົາເຈົ້າບໍ່ໄດ້ມີຈິດໃຈສຳລັບພຣະເຈົ້າ. ການກະທຳທີ່ໝິ່ນປມາດຂອງພວກເຂົາໄດ້ເຮັດໃຫ້ສະຖານທີ່ເຕົ້າໂຮມຊາວຢິວຂອງພວກເຂົາກາຍເປັນ "ທັມມະສາລາຂອງຊາຕານ". ຄຣິສຕະຈັກທີ່ເມືອງຊະມີນາໄດ້ປະເຊີນກັບການຂົ່ມເຫັງຢ່າງໂຫດຮ້າຍ, ແຕ່ພວກເຂົາມີຄວາມອຸດົມສົມບູນໃນພຣະພອນທາງຈິດວິນຍານເພາະຄວາມສຳພັນແລະຄວາມໝັ້ນຄົງຂອງພວກເຂົາໃນພຣະຄຣິດ. ພຣະພອນທາງຈິດວິນຍານແລະຄວາມຮັ່ງມີອັນດຽວກັນນີ້ແຫຼະເປັນຂອງພວກເຮົາຢູ່ໃນປະຈຸບັນ ໃນຂະນະທີ່ພວກເຮົາໄວ້ວາງໃຈໃນພຣະຄຣິດແລະດຳເນີນຊີວິດໄປກັບພຣະອົງ. ມັນບໍ່ແມ່ນການພຽງພໍພຽງແຕ່ເປັນຄົນທີ່ມີ "ສາສນາ"ເທົ່ານັ້ນ; **ພວກເຮົາຈຳເປັນຕ້ອງມີຄວາມສັມພັນເພື່ອອ້າງສິດທິໃນຄວາມຮັ່ງມີມັ່ງຄັ່ງອຸດົມສົມບູນຂອງອົງພຣະຄຣິດ.**

*ຄວາມມັ່ງຄັ່ງອຸດົມສົມບູນອັນໃດທີ່ທ່ານໄດ້ປະສົບມາເພາະຄວາມສຳພັນຂອງທ່ານກັບພຣະຄຣິດ?*

## 2. ພຣະນິມິດ 2:10

*[10]ຢ່າຊູ່ຢ້ານຄວາມທຸກທໍຣະມານທີ່ເຈົ້າຈວນຈະໄດ້ຮັບນັ້ນເບິ່ງແມ, ພະຍາມານຈວນຈະຈັບພວກເຈົ້າບາງຄົນຖິ້ມໃສ່ຄຸກເພື່ອທົດລອງໃຈພວກເຈົ້າແລະພວກເຈົ້າຈະໄດ້ຮັບຄວາມທຸກລຳບາກໃນລະຫວ່າງສິບວັນ. ແຕ່ເຈົ້າຈົ່ງມີໃຈສັດຊື່-ສຸຈະຣິດຈົນເຖິງວັນຕາຍແລ້ວເຮົາຈະເອົາພວງມາລັຍແຫ່ງຊີວິດໃຫ້ແກ່ເຈົ້າ.*

ພຣະເຢຊູໄດ້ຊົງບອກຄຣິສຕະຈັກເມືອງຊະມີນາບໍ່ຕ້ອງຢ້ານສິ່ງທີ່ພວກເຂົາຈະປະເຊີນໜ້າ. ເຂົາເຈົ້າໄດ້ປະເຊີນກັບການທົດລອງ, ຄວາມທຸກຍາກລຳບາກ, ແລະການກົດຂີ່ຂົ່ມເຫັງໃນອະດີດ-ແລະຍັງຈະມີຫຼາຍອີກທີ່ຈະມາເຖິງ. ພວກເຮົາຖືກບອກເຕືອນເລື້ອຍໆໃນພຣະຄັມພີ (ປະມານ 365 ຄັ້ງ!) ວ່າບໍ່ຕອ້ງຢ້ານ, ແລະອົງພຣະເຢຊູໄດ້ຊົງຕັກເຕືອນຜູ້ທີ່ເຊື່ອທີ່ເມືອງຊະມີນາກ່ຽວກັບເຣື່ອງຄວາມຈິງນີ້.

ພວກເຂົາເຈົ້າຕ້ອງການຄຳໜູນໃຈນັ້ນດ້ວຍເຫດວ່າການກົດຂີ່ຂົ່ມເຫັງນັ້ນໄດ້ມາເຖິງແລ້ວ. ພວກຊາວຢິວມີຄວາມກຽດຊັງຊາວຄຣິສຕຽນເທົ່າກັນກັບຊາວຕ່າງດ້າວ, ແລະພວກເຂົາຊອກຫາວິທີທາງທີ່ຈະຈັບກຸມຄຸມຂັງຊາວຄຣິສຕຽນແລະແມ້ກະທັ້ງຂ້າພວກເຂົາເຈົ້າ. ກໍລະນີທີ່ຮູ້ຈັກກັນຫຼາຍທີ່ສຸດແມ່ນກໍລະນີຂອງໂປລີຄາພ (Polycarp) ຊຶ່ງໄດ້ເປັນສິດຍາພິບານຂອງຄຣິສຕະຈັກເມືອງຊະມີນາມາຕັ້ງຫຼາຍປີຫຼັງຈາກຂ່າວປະເສີດຂອງພຣະເຢຊູມາເຖິງ. ໂປລີຄາພປະຕິເສດທີ່ຈະປະຕິບັດຕາມຄວາມຮຽກຮ້ອງຕ້ອງການຂອງເຈົ້າໜ້າທີ່ໂຣມັນໃນການຍົກເລີກຄວາມເຊື່ອຂອງຕົນໃນພຣະ

ຄຣິດແລະປະກາດວ່າຈັກກະພັດຊີຊາ(Caesar)ແມ່ນພຣະຜູ້ເປັນເຈົ້າ. ພວກເຂົາ(ເຈົ້າໜ້າທີ່)ຂູ່ວ່າຈະຈູດລາວໃນເສົາຫີນ, ແຕ່ລາວຍັງຄົງເຂັ້ມແຂງຢູ່ໃນຄວາມເຊື່ອຂອງລາວ(ໂປລີຄາພ). ຄຳຕອບຂອງລາວຕໍ່ເຈົ້າໜ້າທີ່ແມ່ນ: "ທ່ານຂົ່ມຂູ່ວ່າຈະຈູດຂ້ານ້ອຍດ້ວຍໄຟຊຶ່ງຈະໄໝ້ເຜົາຜານຂ້ານ້ອຍພຽງແຕ່ຄາວດຽວແລ້ວກໍຈະມອດດັບໄປ. ທ່ານບໍ່ຮູ້ດອກວ່າໄຟແຫ່ງການຕັດສິນແລະການລົງໂທດນິຣັນຈະມີໄວ້ສຳລັບບັນດາຜູ້ທີ່ບໍ່ເຊື່ອພຣະເຈົ້າ. ທ່ານຈະລໍຖ້າຫຍັງ? ຈົ່ງເຮັດຕາມຄວາມປາຖນາຂອງທ່ານເຖີດ."

ໂປລີຄາພ ຍັງຄົງສັດຊື່ຕໍ່ພຣະເຈົ້າຈົນລາວຕາຍ. ເຊັ່ນດຽວກັນ, ຫຼາຍໆຄົນໃນຄຣິສຕະຈັກເມືອງຊະມີນາຍັງຄົງສັດຊື່ເຊັ່ນດຽວກັນ. ອົງພຣະຄຣິດໄດ້ຊົງໃຫ້ສັນຍາຈະຊົງປະທານ "**ພວງມາລັຍແຫ່ງຊີວິດ**" ແກ່ບັນດາຜູ້ທີ່ຍັງຄົງສັດຊື່ຈົງຮັກພັກດີຕໍ່ພຣະອົງເຖິງແມ່ນວ່ານັ້ນຈະຕ້ອງແມ່ນເຖິງການເສັຽຊີວິດກໍຕາມ. ໃນຂນະທີ່ຄຣິສຕະຈັກເມືອງຊະມີນາອາດຈະຕ້ອງການ**ຂ່າວສານ**ແຫ່ງການປົດປ່ອຍ, ຄຳທີ່ເຂົາເຈົ້າໄດ້ຮັບແມ່ນຂ່າວສານຂອງຄວາມອົດທົນເພື່ອຈະສືບຕໍ່ດຳເນີນຕໍ່ໄປ. ພວກເຮົາຈຳເປັນຕ້ອງການໄດ້ຍິນຂ່າວສານນັ້ນໃນວັນນີ້. ພວກເຮົາຕ້ອງມີຄວາມອົດທົນຕໍ່ຄວາມທຸກຍາກຫຍັງກໍແລ້ວແຕ່ທີ່ກຳລັງມຸ່ງໜ້າມາຫາພວກເຮົາ. ພວກເຮົາຈຳເປັນຕ້ອງມີຄວາມຊື່ສັດຈົງຮັກພັກດີໃນການດຳເນີນຊີວິດໄປກັບພຣະຄຣິດເຖິງມັນຈະຮຽກຮ້ອງມູນຄ່າຣາຄາເທົ່າໃດກໍ່ຕາມ. ໃນຂນະທີ່ຄຣິສຕະຈັກຂອງພວກເຮົາອາດຈະມີຄວາມຄ້າຍຄືກັນກັບຄຣິສຕະຈັກໃນສະຕະວັດທຳອິດໃນເມືອງຊະມີນາແລະການຂົ່ມເຫັງທີ່ພວກເຂົາເຈົ້າປະເຊີນ, ພວກເຮົາກໍຕ້ອງ**ສັດຊື່ຈົນເຖິງຄວາມຕາຍ**ຖ້າຫາກພວກເຮົາຕ້ອງໄດ້ຮັບພວງມາລັຍແຫ່ງຜູ້ມີຊັຍຊະນະ.

*ຄວາມທຸກທໍຣະມານແລະຄວາມຍາກລຳບາກເຮັດວຽກແນວໃດເພື່ອເສີມສ້າງຄວາມເຊື່ອຂອງພວກເຮົາ?*

## 3. ພຣະນິມິດ 2:11

*11 ຜູ້ໃດມີຫູຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍຜູ້ທີ່ຊັຍຊະນະຈະບໍ່ຖືກອັນຕະລາຍຈາກຄວາມຕາຍຄັ້ງທີສອງ'."*

ຖ້ອຍຄຳຂອງພຣະເຢຊູຕໍ່ຄຣິສຕະຈັກເມືອງຊະມີນາໄດ້ສິ້ນສຸດລົງແບບດຽວກັນກັບຂ່າວສານຂອງພຣະອົງຕໍ່ຄຣິສຕະຈັກໃນເມືອງເອເຟໂຊ: *"ຜູ້ໃດມີຫູຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ"* (ຂໍ້ 11). ພຣະອົງຊົງມີພຣະປະສົງໃຫ້ຄຣິສຕະຈັກທັງຫຼາຍບໍ່ພຽງແຕ່ໄດ້ຍິນພຣະຄຳເທົ່ານັ້ນແຕ່ໃຫ້ນຳພຣະຄຳນັ້ນລົງສູ່ຫົວໃຈ. ບັນດາຜູ້ປົກຄອງມັກຈະຖາມລູກຫຼານຢູ່ເລື້ອຍໆໃນທຳນອງດຽວກັນ: "**ເຈົ້າໄດ້ຍິນສິ່ງທີ່ຂ້ອຍເວົ້າບໍ່**?" ພວກເຮົາຖາມຄຳຖາມນີ້ກໍເພື່ອຄວາມແນ່ໃຈວ່າບັນດາຜູ້ຟັງໄດ້ຍິນຖ້ອຍຄຳຂອງພວກເຮົາໂດຍຖືກຕ້ອງ ແລະມີຄວາມສາມາດປະຕິບັດຕາມໂດຍວິທີທາງທີ່ຖືກຕ້ອງ. ພາກສ່ວນຄວາມຈິງຂອງການຮັບຟັງແມ່ນການປະຕິບັດຕາມຄຳສັ່ງແລະຄຳແນະນຳທີ່ພວກເຮົາໄດ້ຖືກມອບໃຫ້ໄປແລ້ວນັ້ນ.

ສຳລັບຄຣິສຕະຈັກເມືອງຊະມີນາ, ຄຳແນະນຳທີ່ອົງພຣະເຢຊູໄດ້ຊົງມອບໃຫ້ແກ່ພວກເຂົາເຈົ້າແມ່ນມີຄວາມສຳຄັນສູງສຸດ. ແນ່ນອນ, ແມ່ນຫຍັງກໍ່ຕາມທີ່ພຣະເຢຊູຊົງເວົ້າແມ່ນສຳຄັນ, ແຕ່ພຣະເຢຊູໄດ້ເນັ້ນໜັກສິ່ງນັ້ນແລະຮຽກຮ້ອງໃຫ້ພວກເຂົາເຈົ້າເອົາໃຈໃສ່ຕໍ່ຖ້ອຍຄຳຂອງພຣະອົງໃນການດຳເນີນຊີວິດຖ້າຫາກພວກເຂົາເຈົ້າຕ້ອງການໄດ້ຮັບລາງວັນທີ່ພຣະອົງໄດ້ຊົງສັນຍາໄວ້ກັບພວກເຂົາເຈົ້າ. ພຣະເຢຊູຊົງມ້ວນທ້າຍຈົດໝາຍໂດຍຊົງດຳຣັດ(ສັ່ງ)ພວກເຂົາເຈົ້າວ່າບໍ່ຕ້ອງຢ້ານກົວຕໍ່ຄວາມຕາຍ. ນອກເສັຽຈາກວ່າພຣະເຢຊູຈະຊົງສະເດັດມາພາຍໃນຊົ່ວຊີວິດນີ້, ພວກເຮົາທັງໝົດຕ້ອງຜະເຊີນໜ້າກັບຄວາມຕາຍຝ່າຍເນື້ອໜັງ. ພຣະເຢຊູບໍ່ໄດ້ເວົ້າເຖິງການຕາຍປະເພດນີ້, ແຕ່ເວົ້າເຖິງການຕາຍຄັ້ງທີ່ສອງ-ການຕາຍຄັ້ງສຸດທ້າຍ, ການຕາຍນິຣັນຊຶ່ງຈະມາຫຼັງຈາກການຊົງພິພາກສາ (ພນມ 20:11-15). ການພິພາກສານັ້ນຈະເປັນເວລາຂອງການແບ່ງແຍກລະ ຫວ່າງບັນດາຜູ້ທີ່ມີຄວາມສຳພັນກັບພຣະຄຣິດໃນລະຫວ່າງ

ທີ່ພວກເພິ່ນມີຊີວິດຢູ່ໃນໂລກນີ້ ແລະ ບັນດາຜູ້ທີ່ປະຕິເສດພຣະອົງ. ບໍ່ມີຜູ້ໃດຖ້າມກາງພວກເຮົາສາມາດຮູ້ວ່າພວກເຮົາຈະຕາຍໂດຍວິທີໃດ? *ແຕ່ສໍາລັບບັນດາຜູ້ທີ່ຮູ້ຈັກ* (ເຊື່ອແລະວາງໃຈ) *ພຣະຄຣິດຈະບໍ່ປະສົບກັບການຕາຍຄັ້ງທີ່ 2* (ຂໍ້ 6 ແລະ14). ໃນຂະນະທີ່ພວກເຮົາທົນທຸກທໍຣະມານໃນອົງພຣະຄຣິດ, ພວກເຮົາບໍ່ຈໍາເປັນດໍາເນີນຊີວິດໃນຄວາມຢ້ານກົວຕໍ່ຄວາມຕາຍ.

ຂໍ້ຄວາມນີ້ໄດ້ຖືກມອບໃຫ້ໄວ້ກັບຄຣິສຕະຈັກເມືອງຊະມີນາ, ແຕ່ມັນມີຄວາມກ່ຽວຂ້ອງກັບພວກເຮົາໃນປະຈຸບັນນີ້. **ຈົ່ງເຂັ້ມແຂງ, ສັດຊື່, ແລະໄຊຊະນະຈະເປັນຂອງທ່ານໃນທີ່ສຸດ.**

*ແມ່ນວິທີທາງໃດແດ່ທີ່ຄຣິສຕະຈັກຂອງພວກເຮົາຄ້າຍຄືກັບຄຣິສຕະຈັກແຫ່ງເມືອງຊະມີນາ?*

*ມີບາງວິທີປະຕິບັດແນວໃດທີ່ເປັນການປະຕິເສດຄວາມຢ້ານກົວແລະໂອບກອດພຣະສັນຍາຂອງພຣະເຈົ້າສໍາລັບອະນາຄົດຂອງພວກເຮົາ?*

## ນໍາໃຊ້ໃນຊີວິດ:

ທ່ານຈະໄດ້ຍິນພຣະວິນຍານບໍຣິສຸດຂອງພຣະເຈົ້າກໍາລັງບອກທ່ານໃຫ້ເຮັດຫຍັງໃນວັນນີ້ໂດຍວິທີໃດ? ຈົ່ງເລືອກເອົານຶ່ງໃນການນໍາໃຊ້ຕໍ່ລົງໄປນີ້:

- **ຈົ່ງໄວ້ວາງໃຈ.** ພຣະຄຣິດໄດ້ຊົງໃຫ້ພວກເຮົາຊົມເບິ່ງອົດຊາດຂອງຄວາມຕາຍເພື່ອໃຫ້ພວກເຮົາບໍ່ຕ້ອງປະສົບກັບການຕາຍຄັ້ງທີ່ສອງ. ຈົ່ງຫັນໜ້າໜີຈາກຄວາມບາບແລະໄວ້ວາງໃຈໃນອົງພຣະຄຣິດໃຫ້ໄຖ່ພວກທ່ານ.
- **ຈົ່ງຂອບພຣະຄຸນ.** ຈົ່ງຂຽນບັນຊີຂອງທຸກວິຖີທາງທີ່ທ່ານຮັ່ງມີດ້ວຍພຣະຄຸນຂອງພຣະເຈົ້າໃນຊີວິດຂອງທ່ານ. ຈົ່ງໃຊ້ເວລາໃນການອະທິຖານ, ຂອບພຣະຄຸນພຣະເຈົ້າສໍາລັບພຣະພອນທັງໝົດທີ່ພຣະອົງໄດ້ຊົງປະທານໃຫ້.
- **ຈົ່ງໃຫ້ກໍາລັງໃຈ.** ຖ້າທ່ານຮູ້ຈັກໃຜຜູ້ນຶ່ງຊຶ່ງກໍາລັງລົ້ມລຸກຄຸກຄານຢູ່ໃນການດໍາເນີນຊີວິດໄປກັບພຣະຄຣິດ, ຈົ່ງໃຫ້ກໍາລັງໃຈແກ່ລາວໃຫ້ອົດທົນແລະຍຶດໝັ້ນຢູ່ໃນພຣະອົງ. ໃຊ້ຕົວຢ່າງການອົດທົນພາກພຽນພະຍາຍາມຂອງທ່ານຕໍ່ການຜະເຊີນໜ້າກັບຄວາມຍາກລໍາບາກເພື່ອໜູນໃຈຊຸກຍູ້ຄວາມໝັ້ນຄົງຂອງພວກເຂົາເຈົ້າ.

ກໍຫວັງວ່າພວກທ່ານຈະບໍ່ປະສົບສະຖານະການທີ່ເປັນພັຍຂົ່ມຂູ່ຕໍ່ຊີວິດຈັກເທື່ອດ້ວຍຄວາມເຊື່ອຂອງພວກທ່ານ! ແຕ່ວ່າມັນເປັນການດີທີ່ຮູ້ວ່າ: **ທ່ານສາມາດຢືນຢູ່ຢ່າງໝັ້ນຄົງເພາະອົງພຣະຄຣິດ**.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ http://lsbf.us ແປໂດຍ SSK**